**ມິຊຊາອາທິດທີ 25 ການົດທຳມະດາປີ A**

**ວັນທີ 20 ກັນຍາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 20,1-16**

ໃນເວລານັ້ນ, ພຣະເຢຊູເຈົ້າໄດ້ກ່າວຄວາມປຽບທຽບນີ້ໃຫ້ພວກສາວົກຟັງວ່າ: ອານາຈັກສະຫວັນປຽບໄດ້ກັບພໍ່ເຮືອນຜູ້ໜຶ່ງທີ່ອອກໄປແຕ່ເຊົ້າໆເພື່ອຊອກຈ້າງຄົນໄປທຳງານໃນສວນອະງຸ່ນຂອງລາວ. ເມື່ອໄດ້ຕົກລົງຄ່າຈ້າງກັບພວກລູກຈ້າງວ່າ: ວັນລະຫລຽນແລ້ວ, ລາວກໍສົ່ງພວກເຂົາໄປທຳງານໃນສວນອະງຸ່ນຂອງລາວ. ພໍປະມານເກົ້າໂມງເຊົ້າ, ພໍ່ເຮືອນຜູ້ນັ້ນໄດ້ອອກໄປແລະໄດ້ເຫັນຄົນອື່ນອີກຢູ່ຕາມສະໜາມບໍ່ມີວຽກເຮັດ. ພໍ່ເຮືອນຈຶ່ງເວົ້າກັບພວກນັ້ນວ່າ: ໃຫ້ພວກເຈົ້າໄປທຳງານໃນສວນອະງຸ່ນຂອງຂ້ອຍ, ຂ້ອຍຈະຈ່າຍຄ່າຈ້າງໃຫ້ຕາມສົມຄວນແລະພວກເຂົາກໍພ້ອມກັນໄປ. ເວລາປະມານທ່ຽງແລະບ່າຍສາມໂມງ, ພໍ່ເຮືອນນັ້ນກໍອອກໄປແລະໄດ້ກະທຳດັ່ງເທື່ອກ່ອນ. ປະມານຫ້າໂມງແລງ, ພໍ່ເຮືອນກໍອອກໄປອີກແລະຍັງໄດ້ພົບຄົນອື່ນໆຢູ່ບ່ອນນັ້ນຈຶ່ງເວົ້ານຳພວກເຂົາວ່າ: “ເປັນຫຍັງພວກເຈົ້າຈຶ່ງຢູ່ນີ້ລ້າໆໝົດມື້ໝົດເວັນ.” ພວກເຂົາຈຶ່ງຕອບລາວວ່າ: “ຍ້ອນວ່າບໍ່ມີໃຜມາຈ້າງພວກເຮົາ.” ພໍ່ເຮືອນຈຶ່ງເວົ້າກັບພວກນັ້ນວ່າ: “ໃຫ້ພວກເຈົ້າໄປທຳງານໃນສວນອະງຸ່ນຂອງຂ້ອຍດ້ວຍ.” ເມື່ອຕົກຄ່ຳແລ້ວ, ເຈົ້າຂອງສວນອະງຸ່ນບອກຜູ້ຈັດການວ່າ: “ຈົ່ງຮ້ອງພວກລູກຈ້າງມາ ແລະຈ່າຍຄ່າຈ້າງໃຫ້ພວກເຂົາໂດຍເລີ່ມຈ່າຍໃຫ້ພວກສຸດທ້າຍກ່ອນ. ພວກທີ່ລົງທຳງານເວລາຫ້າໂມງແລງກໍເຂົ້າມາແລະໄດ້ຮັບຜູ້ລະໜຶ່ງຫລຽນ. ພວກທີ່ເຂົ້າມາທຳງານກ່ອນກໍເຂົ້າມາດ້ວຍ ຫວັງຈະໄດ້ຮັບຫລາຍກວ່າ, ແຕ່ໄດ້ຮັບຜູ້ລະໜຶ່ງຫລຽນຄືກັນດ້ວຍ. ພວກເຂົາຈຶ່ງຮັບເອົາເງິນຫລຽນນັ້ນດ້ວຍຈົ່ມວ່າໃສ່ເຈົ້າຂອງສວນ”. ພວກນີ້ມາຕາມຫລັງໄດ້ທຳງານແຕ່ຊົ່ວໂມງດຽວເທົ່ານັ້ນ, ທ່ານກໍໃຫ້ຄ່າຈ້າງເຂົາເທົ່າກັບພວກຂ້ານ້ອຍຜູ້ໄດ້ທົນແດດຮ້ອນຕະຫລອດມື້. ເຈົ້າຂອງສວນຈຶ່ງຕອບຜູ້ໜຶ່ງໃນພວກນັ້ນວ່າ: “ສະຫາຍເອີຍ! ຂ້ອຍບໍ່ໄດ້ເຮັດຫຍັງຜິດເຈົ້າເລີຍ ພວກເຮົາບໍ່ໄດ້ຕົກລົງກັນໜຶ່ງຫລຽນຊັ້ນບໍ? ເຊີນຮັບເອົາສ່ວນຂອງເຈົ້າແລ້ວກໍໄປເສຽ. ຂ້ອຍພໍໃຈໃຫ້ຜູ້ທີ່ມາທີຫລັງເທົ່າກັບເຈົ້າ: ຂ້ອຍບໍ່ມີສິດໃຊ້ຊັບສິນຂອງຂ້ອຍຕາມໃຈຂ້ອຍບໍ. ຫລືວ່າເຈົ້າມີໃຈອິດສາຍ້ອນຂ້ອຍໃຈດີບໍ? ດັ່ງນີ້ແລ້ວ, ພວກສຸດທ້າຍຈະກັບເປັນພວກທີ່ຕົ້ນແລະພວກທີ່ຕົ້ນຈະກັບເປັນພວກສຸດທ້າຍ”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 20,1-16**

ບົດອ່ານສາມບົດໃນວັນອາທິດນີ້ລ້ວນແຕ່ເຊື້ອເຊີນພວກເຮົາໃຫ້ຊອກຫາພຣະເຈົ້າຕະຫລອດເວລາ ເພື່ອຈະໄດ້ພົບພຣະອົງແລະຢູ່ນຳພຣະອົງ.

ໃນບົດອ່ານທີໜຶ່ງຈາກໜັງສືຂອງປະພາສົກອີຊາຢາກ່າວວ່າ: "ຈົ່ງຊອກສະແຫວງຫາພຣະອົງເຈົ້າ ຕະຫລອດເວລາທີ່ຈະພົບພຣະອົງໄດ້. ຈົ່ງຮ້ອງຫາພຣະອົງເຈົ້າຕະຫລອດເວລາທີ່ພຣະອົງຊົງສະຖິດຢູ່ໃກ້". ເປັນຫຍັງຈຶ່ງຕ້ອງຊອກຫາພຣະອົງ? ຍ້ອນ "ພຣະອົງເຈົ້າເປັນຜູ້ມີໃຈອ່ອນຫວານແລະເມດຕາກະລຸນາ,ບໍ່ຊົງໂກດງ່າຍແຕ່ເຕັມພຽບດ້ວຍຄວາມຮັກ. ພຣະອົງຊົງພຣະໄທດີຕໍ່ໝົດທຸກຄົນແລະຄວາມອ່ອນຫວານຂອງພຣະອົງແຜ່ໄປໃນທຸກວຽກງານຂອງພຣະອົງ" (ພສສ 144, 8-9). ເປັນຄຳເວົ້າຂອງບົດເພງສັກສິດ 144 ຊຶ່ງພວກເຮົາໄດ້ຂັບແລະອ່ານໃນວັນນີ້.

ໃນບົດອ່ານທີສອງ, ນັກບຸນເປົາໂລໄດ້ສະແດງຄວາມຮັກຮ້ອນແຮງຂອງທ່ານຕໍ່ພຣະເຢຊູກຣິສໂຕເຈົ້າໂດຍກ່າວວ່າ: "ບໍ່ວ່າຂ້າພະເຈົ້າຈະມີຊີວິດຢູ່ຫລືຕາຍໄປກໍຕາມ, ພຣະກຣິສໂຕເຈົ້າຈະໄດ້ຮັບກຽດມຸງຄຸນໃນຕົວຂ້າພະເຈົ້າ". ຫລືເວົ້າອີກຢ່າງ, ບໍ່ວ່າຈະມີຊີວິດຢູ່ ກໍຂໍຢູ່ເພື່ອພຣະອົງ. ບໍ່ວ່າຈະຕາຍໄປ ກໍຂໍໄດ້ຕາຍເພື່ອພຣະອົງ.

ສ່ວນໃນພຣະວໍລະສານວັນນີ້, ບໍ່ແມ່ນພວກເຮົາເປັນຜູ້ຊອກຫາພຣະເຈົ້າ ແຕ່ແມ່ນພຣະອົງເປັນຜູ້ຊອກຫາພວກເຮົາກ່ອນ. ດັ່ງໃນຄວາມປຽບທຽບເລື່ອງພໍ່ເຮືອນທີ່ຊອກຫາຈ້າງຄົນໄປທຳງານໃນສວນອະງຸ່ນຂອງລາວ. ພໍ່ເຮືອນຄົນນີ້ເປັນຄົນໃຈກວ້າງ ແລະພ້ອມທີ່ຈະຮັບທຸກຄົນໃນທຸກເວລາເຂົ້າມາທຳງານໃນສວນອະງຸ່ນຂອງລາວ. ເທົ່ານັ້ນບໍ່ພໍ, ເມື່ອຮອດຍາມຮັບຄ່າຈ້າງພໍ່ເຮືອນຜູ້ນີ້ຍັງສັ່ງໃຫ້ຜູ້ຈັດການຈ່າຍຄ່າຈ້າງໃຫ້ຄົນມາທຳງານສຸດທ້າຍກ່ອນ. ແລະທຸກຄົນກໍໄດ້ຮັບຄ່າຈ້າງເທົ່າທຽມກັນ. ຍ້ອນຄວາມໃຈດີຂອງພໍ່ເຮືອນຈຶ່ງເຮັດໃຫ້ລູກຈ້າງມີຄວາມອິດສາແລະບໍ່ພໍໃຈ. ແນ່ນອນ, ຮູບພາບຂອງພໍ່ເຮືອນຜູ້ໃຈດີນີ້ແມ່ນພຣະບິດາຂອງພວກເຮົາຜູ້ສະຖິດຢູ່ສະຫວັນ. ແລະສວນອະງຸ່ນນັ້ນແມ່ນຮູບພາບຂອງອານາຈັກຂອງພຣະບິດາ. ສ່ວນເງິນໜຶ່ງຫລຽນນັ້ນແມ່ນຮູບພາບຂອງຊີວິດນິລັນດອນ. ພຣະອົງບໍ່ຢຸດຢ່ອນທີ່ຈະຊອກຫາພວກເຮົາ ເພື່ອໃຫ້ພວກເຮົາໄດ້ຢູ່ນຳພຣະອົງ. ເພື່ອໃຫ້ພວກເຮົາໄດ້ຮັບຄ່າຈ້າງທີ່ດີທີ່ສຸດອັນແມ່ນຊີວິດນິລັນດອນນັ້ນເອງ.

**ພາວະນາ**

ໂອພຣະບິດາເຈົ້າ, ລູກເຊື່ອວ່າ "ພຣະອົງຊົງສະຖິດຢູ່ໃກ້ບັນດາຜູ້ທີ່ຮ້ອງຫາພຣະອົງ" ດັ່ງບົດຮັບໃນບົດເພງສັກສິດຂອງວັນນີ້. ໂຜດໃຫ້ລູກສຳພັດໄດ້ເຖິງຄວາມຮັກຂອງພຣະອົງແລະຫັນມາພຣະອົງຜູ້ເປັນບິດາຂອງລູກເພື່ອຈະໄດ້ຢູ່ນຳພຣະອົງຕະຫລອດໄປ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ